ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ວຽກງານສົ່ງເສີມການເງິນສີຂຽວ ໃນ ສປປ ລາວ




**ສຳລັບ ສປປ ລາວ"** ໂດຍການເປັນປະທານຮ່ວມຂອງທ່ານ ນາງ ວຽງດາລີ ສຸພານຸວົງ ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຮອງຄະນະຮັບຜິດຊອບຄົ້ນຄວ້າວຽກງານການເງິນທີ່ຍືນຍົງ ແລະ ທ່ານ ພົງສະຫວັນ ພົມກອງ ຫົວໜ້າຫ້ອງການ ອົງການການເງິນສາກົນ ປະຈຳ ສປປ ລາວ.

ຈຸດປະສົງໃນການຈັດກອງປະຊຸມສຳມະນາໃນຄັ້ງນີ້ ແມ່ນ ເພື່ອນຳສະເໜີການພັດທະນາວຽກງານການເງິນສີຂຽວຢູ່ ສປປ ລາວ ລວມທັງບົດບາດຂອງຜູ້ສ້າງລະບຽບການ ແລະ ສະຖາບັນການເງິນໃນການສົ່ງເສີມຕະຫຼາດສຳລັບການເງິນສີຂຽວ, ນອກນັ້ນ ຍັງເປັນເວທີໃນການແລກປ່ຽນບົດຮຽນ ແລະ ປະສົບການຂອງຊ່ຽວຊານຈາກຕ່າງປະເທດພາຍໃນພາກພື້ນ ແລະ ສາກົນ ໃນການຫັນປ່ຽນເປັນທະນາຄານສີຂຽວ ຫຼື Green Banking Transformation.

**ວຽກງານການເງິນສີຂຽວເປັນວຽກງານໜຶ່ງທີ່ສຳຄັນທີ່ຊ່ວຍໃຫ້ບັນດາປະເທດທີ່ຈັດຕັ້ງປະຕິບັດສາມາດຊຸກຍູ້ວຽກງານການເງິນແບບຍືນຍົງ** ໃນໄລຍະຜ່ານມາທະນາຄານແຫ່ງ ສປປ ລາວ ໄດ້ຮ່ວມມືກັບອົງການການເງິນສາກົນໃນການປະເມີນຄວາມພ້ອມຂອງຕະຫຼາດ ເພື່ອທົບທວນຂອບການເງິນສີຂຽວໃນປະຈຸບັນ ເພື່ອປັບປຸງສະພາບແວດລ້ອມທີ່ອຳນວຍໃຫ້ແກ່ການເງິນສີຂຽວ ໂດຍການສ້າງແຜນຍຸດທະສາດໃນການສົ່ງເສີມການເງິນແບບຍືນຍົງ ແລະ ກຳນົດໝວດກິດຈະກຳຍືນຍົງຂອງ ສປປ ລາວ ຊຶ່ງຈະເປັນການກຳນົດແນວທາງລວມໃນຂະແໜງການທະນາຄານ ແລະ ຕະຫຼາດທຶນ ໃນການຊຸກຍູ້ທາງດ້ານປ່ອຍກູ້ສີຂຽວ, ເພີ່ມການລົງທຶນສີຂຽວ, ເງິນກູ້ເພື່ອສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງທີ່ມີເງື່ອນໄຂ.




ຂ່າວ ແລະ ພາບໂດຍ: ສອນໄຊ ສີຫາເທບ

*ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ*